ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 228 /ນຍ

ນະຄອນຫລວງວຽງຈັນ, ວັນທີ 22.04.2010

# ດຳລັດ
## ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0603/ອຄ.ກຂອ, ລົງວັນທີ 24 ມີນາ 2010.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ ແລະ ລະບຽບການກ່ຽວກັບແຫລ່ງກຳເນີດສິນຄ້ານຳເຂົ້າ, ສົ່ງອອກ ແນໃສ່ສົ່ງເສີມການຄ້າ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງເອົາສິດພິເສດທາງການຄ້າ, ປົກປັກຮັກສາສິ່ງແວດລ້ອມ ເຮັດໃຫ້ເສດຖະກິດແຫ່ງຊາດມີການພັດທະນາ, ມີຄວາມເຕີບໃຫຍ່ເຂັ້ມແຂງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

**ມາດຕາ 2. ແຫລ່ງກຳເນີດສິນຄ້າ**

ແຫລ່ງກຳເນີດສິນຄ້າ ແມ່ນບ່ອນທີ່ສິນຄ້າໄດ້ເກີດຂຶ້ນ ຫລື ບ່ອນທີ່ສິນຄ້າໄດ້ຜ່ານຂະບວນການຜະລິດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. ລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ ໝາຍເຖິງ ລະບຽບທີ່ໃຊ້ໃນການກຳນົດແຫລ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີ ລະຫວ່າງ ສອງປະເທດ ຫລື ຫລາຍປະເທດ ຊຶ່ງສິນຄ້າທີ່ມີແຫລ່ງກຳເນີດຈາກປະເທດທີ່ເປັນພາຄີຂອງສັນຍານັ້ນຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນພາສີນຳເຂົ້າ;
2. ລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າທີ່ບໍ່ໄດ້ສິດພິເສດ ໝາຍເຖິງລະບຽບທີ່ໃຊ້ໃນການກຳນົດແຫລ່ງກຳເນີດສິນຄ້ານຳເຂົ້າ ເພື່ອປະຕິບັດຫລັກການການໄດ້ຮັບອະນຸເຄາະຫລາຍທີ່ສຸດ, ການຕອບໂຕ້ການທຸ່ມຕະຫລາດ ແລະ ການອຸດໜູນ, ການປົກປ້ອງຜູ້ຜະລິດພາຍໃນປະເທດ, ຈຳກັດປະລິມານນຳເຂົ້າ, ການຈັດຊື້ຂອງລັດຖະບານ ແລະ ການເກັບກຳສະຖິຕິການຄ້າ;
3. ການປ່ຽນແປງຢ່າງຫລວງຫລາຍຂອງສິນຄ້າ ໝາຍເຖິງ ສິນຄ້າທີ່ໄດ້ຜ່ານຂະບວນການຜະລິດຈົນກາຍເປັນສິນຄ້າອີກຊະນິດໜຶ່ງ ທີ່ມີລະຫັດສິນຄ້າ, ຮູບແບບ, ໜ້າທີ່, ຈຸດພິເສດພື້ນຖານ ຫລືເປົ້າໝາຍ ການນຳໃຊ້ ແຕກຕ່າງ ຈາກວັດສະດຸນຳເຂົ້າທີ່ໃຊ້ໃນການຜະລິດສິນຄ້ານັ້ນ;
4. ເຈົ້າໜ້າທີ່ ຫລື ອົງການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ໝາຍເຖິງ ເຈົ້າໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ ຫລື ຜູ້ຕາງໜ້າທີ່ຖືກມອບສິດໃຫ້ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າສົ່ງອອກ;
5. ເຈົ້າໜ້າທີ່ ທີ່ມີສິດກວດກາ ແລະ ຮັບຮອງໃບຢັ້ງຢືນແຫລ່ງກຳເນີດສິນຄ້ານຳເຂົ້າ ໝາຍເຖິງ ເຈົ້າໜ້າທີ່ພາສີ;
6. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ໝາຍເຖິງ ເອກະສານທີ່ຊີ້ບອກບ່ອນທີ່ສິນຄ້າໄດ້ເກີດຂຶ້ນ ຫລື ໄດ້ຜ່ານຂະບວນການຜະລິດ ຊຶ່ງອອກ ໂດຍເຈົ້າໜ້າທີ່ ຫລື ອົງການທີ່ມີສິດຂອງປະເທດຜູ້ສົ່ງອອກ;
7. ສິນຄ້າ ໝາຍເຖິງ ວັດສະດຸ ຫລືຜະລິດຕະພັນ ທີ່ໄດ້ຜະລິດຂຶ້ນມາ ແລະມີມູນຄ່າທາງການຄ້າ;
8. ວັດສະດຸ ໝາຍເຖິງ ວັດຖຸດິບ, ສ່ວນປະສົມ, ສ່ວນປະກອບ, ອົງປະກອບ, ຊິ້ນສ່ວນຍ່ອຍ ຫລື ສິ່ງຂອງທີ່ໄດ້ປະກອບເຂົ້າກັນເປັນສິນຄ້າອື່ນ ຫລື ໄດ້ຜ່ານກຳມະວິທີການຜະລິດຈົນກາຍເປັນສິນຄ້າອີກຊະນິດໜຶ່ງ.

ມາດຕາ 4. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບພາກສ່ວນຕ່າງໆ ດັ່ງນີ້:

1. ຜູ້ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ ທັງພາຍໃນ ແລະ ຕ່າງປະເທດ ທີ່ຕ້ອງການໃບຢັ້ງຢືນແຫລ່ງກຳເນີດສິນຄ້າ;
2. ເຈົ້າໜ້າທີ່ ຫລື ອົງການທີ່ມີສິດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າສົ່ງອອກ;

3. ເຈົ້າໜ້າທີ່ ທີ່ມີສິດກວດກາ ແລະ ຮັບຮອງ ໃບຢັ້ງຢືນແຫລ່ງກຳເນີດສິນຄ້ານຳເຂົ້າ;
4. ຜູ້ຕາງໜ້າທີ່ໄດ້ຮັບການມອບສິດໃນການອອກ, ການຮັບຮອງ ແລະ ການກວດກາໃບຢັ້ງຢືນແຫລ່ງກຳເນີດສິນຄ້າ;
5. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ມີການເຄື່ອນໄຫວກ່ຽວຂ້ອງກັບການຄ້າ.

## ໝວດທີ 2
## ລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ

**ມາດຕາ 5. ແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດພາຍໃຕ້ສັນຍາສາກົນ**

ໃນການກຳນົດແຫລ່ງກຳເນີດສິນຄ້າຈາກປະເທດທີ່ໄດ້ຮັບສິດພິເສດ ໃຫ້ປະຕິບັດຕາມລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າ ພາຍໃຕ້ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6. ແຫລ່ງກຳເນີດສິນຄ້າທີ່ໃຫ້ສິດພິເສດແບບຝ່າຍດຽວ**

ໃນການກຳນົດແຫລ່ງກຳເນີດສິນຄ້າສົ່ງອອກ ພາຍໃຕ້ໂຄງການໃຫ້ສິດພິເສດຝ່າຍດຽວ ໃຫ້ປະຕິບັດຕາມລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າຂອງປະເທດນຳເຂົ້າ.

## ໝວດທີ 3
## ລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າທີ່ບໍ່ໄດ້ສິດພິເສດ

**ມາດຕາ 7. ການກຳນົດແຫລ່ງກຳເນີດສິນຄ້າ**

ໃນການກຳນົດແຫລ່ງກຳເນີດສິນຄ້າ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ສິນຄ້າທີ່ໄດ້ມາ ຫລື ຜະລິດຂຶ້ນ ໂດຍໃຊ້ວັດຖຸດິບພາຍໃນປະເທດທັງໝົດ

ສິນຄ້າຕໍ່ໄປນີ້ ໃຫ້ຖືວ່າເປັນສິນຄ້າທີ່ໄດ້ມາ ຫລື ຜະລິດຂຶ້ນ ໂດຍໃຊ້ວັດຖຸດິບພາຍໃນປະເທດທັງໝົດ:

(1) ພືດ ແລະ ຜະລິດຕະພັນຈາກພືດ ທີ່ເກີດ, ປູກ ແລະເກັບກ່ຽວ ພາຍໃນປະເທດນັ້ນ;
(2) ສັດມີຊີວິດທີ່ເກີດ ແລະ ລ້ຽງໃນປະເທດນັ້ນ;
(3) ຜະລິດຕະພັນທີ່ໄດ້ຈາກສັດມີຊີວິດ ຕາມທີ່ໄດ້ກ່າວໄວ້ໃນຂໍ້ (2) ເທິງນີ້;
(4) ຜະລິດຕະພັນທີ່ໄດ້ຈາກການລ່າສັດ, ການຫ້າງແຮ້ວ, ການປະມົງ, ການລ້ຽງສັດນ້ຳ, ການຈັບ ຫລື ການຫາໄດ້ໃນປະເທດນັ້ນ;
(5) ແຮ່ທາດ ແລະ ວັດຖຸ ທີ່ເກີດຂຶ້ນເອງຕາມທຳມະຊາດ ຊຶ່ງບໍ່ໄດ້ລວມເອົາ ຂໍ້ (1) ເຖິງ (4) ທີ່ໄດ້ມາຈາກພື້ນດິນ, ພື້ນນ້ຳ ຫລື ພື້ນທະເລ ຂອງປະເທດນັ້ນ;

(6) ຜະລິດຕະພັນຈາກການປະມົງທາງທະເລ ແລະຜະລິດຕະພັນອື່ນໆຈາກທະເລຫລວງ ຊຶ່ງເຮືອທີ່ຈົດທະບຽນ ແລະປັກທຸງຂອງປະເທດກ່ຽວຂ້ອງນັ້ນ ໄດ້ມາ;

(7) ຜະລິດຕະພັນທີ່ໄດ້ມາ ຫລື ທີ່ຜະລິດໃນໂຮງງານຢູ່ເທິງເຮືອຈາກຜະລິດຕະພັນ ທີ່ກ່າວໄວ້ໃນຂໍ້ (6) ເທິງນີ້ ຖ້າວ່າເຮືອນັ້ນຫາກຈົດທະບຽນ ແລະປັກທຸງຂອງປະເທດກ່ຽວຂ້ອງນັ້ນ;

(8) ຜະລິດຕະພັນທີ່ໄດ້ມາຈາກພື້ນນ້ຳ ຫລື ພື້ນທະເລ ນອກເຂດນ່ານນ້ຳຂອງ ປະເທດຜູ້ສົ່ງອອກ ຖ້າວ່າປະເທດນັ້ນຫາກມີສິດໃຊ້ປະໂຫຍດຈາກພື້ນນ້ຳ ຫລື ພື້ນທະເລ ຕາມກົດໝາຍສາກົນ;

(9) ສິ່ງເສດເຫລືອຈາກການຜະລິດ ຫລືສິ່ງຂອງທີ່ໃຊ້ແລ້ວ ຊຶ່ງເກັບໄດ້ໃນປະເທດນັ້ນ ແລະເໝາະສຳລັບໃຊ້ເປັນວັດຖຸດິບຄືນໃໝ່;

(10) ສິນຄ້າທີ່ໄດ້ຜະລິດໃນປະເທດນັ້ນ ຈາກຜະລິດຕະພັນທີ່ໄດ້ກ່າວໄວ້ໃນຂໍ້ (1) ເຖິງ (9) ເທິງນີ້ ເທົ່ານັ້ນ.

2. **ການປ່ຽນແປງຢ່າງຫລວງຫລາຍຂອງສິນຄ້າ**

ໃນກໍລະນີທີ່ຫລາຍປະເທດ ຫາກກ່ຽວຂ້ອງກັບການຜະລິດສິນຄ້າໃດໜຶ່ງ, ປະເທດທີ່ດຳເນີນການປ່ຽນແປງຢ່າງຫລວງຫລາຍຂອງສິນຄ້າເທື່ອສຸດທ້າຍ ໃຫ້ຖືເປັນປະເທດແຫລ່ງກຳເນີດຂອງສິນຄ້ານັ້ນ.

ເພື່ອກຳນົດວ່າສິນຄ້າໄດ້ຮັບການປ່ຽນແປງຢ່າງຫລວງຫລາຍ ຫລືບໍ່ ຕາມທີ່ໄດ້ກ່າວໄວ້ໃນວັກເທິງນີ້ ໃຫ້ອີງໃສ່ການປ່ຽນແປງລະຫັດເຄົ້າຂອງສິນຄ້າເທົ່ານັ້ນ.

**ມາດຕາ 8. ການປ່ຽນແປງພຽງເລັກນ້ອຍຂອງສິນຄ້າ**

ສິນຄ້າທີ່ມີການປ່ຽນແປງພຽງເລັກນ້ອຍໃນກໍລະນີດັ່ງຕໍ່ໄປນີ້ ໃຫ້ຖືວ່າເປັນສິນຄ້າທີ່ບໍ່ໄດ້ແຫລ່ງກຳເນີດ:

1. ການເກັບຮັກສາສິນຄ້າໃຫ້ຢູ່ໃນສະພາບດີເພື່ອການຂົນສົ່ງ ຫລືການເກັບມ້ຽນໄວ້ໃນສາງ ເຊັ່ນ: ການຕາກແຫ້ງ, ການແຊ່ເຢັນ, ການເອືອບເກືອ, ການແຊ່ເກືອ ແລະ ອື່ນໆ;
2. ການກະທຳແບບງ່າຍດາຍ ເຊັ່ນ: ການຮ່ອນ, ການຈັດປະເພດ, ການແຍກປະເພດ ຫລື ການຈັດເປັນຊຸດ, ການລ້າງ, ການທາສີ, ການຕັດອອກ;
3. ການປ່ຽນແປງການບັນຈຸຫຸ້ມຫໍ່, ການແຍກ ແລະ ການປະກອບຊິ້ນສ່ວນເຂົ້າກັນ;
4. ການຕັດເປັນຊິ້ນສ່ວນ ຫລື ເປັນແຜ່ນ, ການບັນຈຸຫຸ້ມຫໍ່ຄືນ ຫລື ການບັນຈຸໃສ່ຂວດ, ໃສ່ຖົງ, ໃສ່ຫີບ ແບບງ່າຍດາຍ ແລະ ການບັນຈຸຫຸ້ມຫໍ່ແບບງ່າຍດາຍອື່ນໆ;
5. ການຕິດເຄື່ອງໝາຍ, ສະຫລາກ, ປ້າຍ ຫລື ສັນຍາລັກ ອື່ນໆທີ່ຄ້າຍຄືກັນ ໃສ່ຜະລິດຕະພັນ ຫລື ສິ່ງຫຸ້ມຫໍ່;
6. ການປະສົມຜະລິດຕະພັນເຂົ້າກັນແບບງ່າຍດາຍ;
7. ການປະກອບຊິ້ນສ່ວນຂອງຫລາຍຜະລິດຕະພັນແບບງ່າຍດາຍ ເຂົ້າກັນເປັນສິນຄ້າສຳເລັດຮູບ;

8. ການປະສົມປະສານສອງ ຫລື ຫລາຍການກະທຳທີ່ໄດ້ກ່າວໄວ້ໃນຂໍ້ 1 ເຖິງ 7 ເທິງນີ້;
9. ການຂ້າສັດ.

## ມາດຕາ 9. ສ່ວນປະກອບທົ່ວໄປ

ໃນການກຳນົດແຫລ່ງກຳເນີດສິນຄ້າໃດໜຶ່ງ ບໍ່ໃຫ້ຖືເອົາສິນຄ້າທີ່ເປັນສ່ວນປະກອບທົ່ວໄປຕໍ່ໄປນີ້ ເຖິງວ່າສິນຄ້າດັ່ງກ່າວອາດຈະຖືກນຳໃຊ້ໃນຂະບວນການຜະລິດ ກໍຕາມ:

- ພະລັງງານ ແລະ ນ້ຳມັນເຊື້ອໄຟ;
- ເຄື່ອງຈັກ ແລະ ເຄື່ອງມື;
- ໂຮງງານ, ອຸປະກອນ ລວມທັງອຸປະກອນເພື່ອຮັກສາຄວາມປອດໄພ;
- ນ້ຳມັນເຄື່ອງ, ນ້ຳມັນໄຂ ແລະວັດຖຸດິບທີ່ມີສ່ວນປະສົມຫລາຍຢ່າງ;
- ຖົງມື, ແວ່ນຕາ, ເກີບ ແລະເຄື່ອງນຸ່ງ;
- ສານເລັ່ງ ແລະສານລະລາຍ.

## ມາດຕາ 10. ການກຳນົດແຫລ່ງກຳເນີດຂອງສິ່ງຫຸ້ມຫໍ່ສິນຄ້າ, ເຄື່ອງອຸປະກອນ, ເຄື່ອງອາໄຫລ່, ເຄື່ອງມື ແລະສິນຄ້າທີ່ຍັງບໍ່ໄດ້ປະກອບເຂົ້າກັນ ຫລື ແຍກອອກ

ວັດສະດຸຫຸ້ມຫໍ່ສິນຄ້າ, ເຄື່ອງອຸປະກອນ, ເຄື່ອງອາໄຫລ່, ເຄື່ອງມື ແລະ ປື້ມຄູ່ມື ຫລື ເອກະສານແນະນຳອື່ນ ຊຶ່ງຕິດມານຳສິນຄ້າ ໃຫ້ຖືວ່າ ມີແຫລ່ງກຳເນີດດຽວກັນກັບສິນຄ້ານັ້ນ.

ສຳລັບສິນຄ້າໃດໜຶ່ງທີ່ຍັງບໍ່ທັນໄດ້ປະກອບເຂົ້າກັນ ຫລື ແຍກກັນຢູ່ ຊຶ່ງນຳເຂົ້າມາເປັນຫລາຍຖ້ຽວ ຍ້ອນເງື່ອນໄຂທາງດ້ານການຂົນສົ່ງ ຫລືການຜະລິດ ນັ້ນ ແຫລ່ງກຳເນີດຂອງສິນຄ້າໃນແຕ່ລະຖ້ຽວ ມີແຫລ່ງກຳເນີດດຽວກັນກັບສິນຄ້ານັ້ນ.

# ໝວດທີ 4
# ຂັ້ນຕອນການຈັດຕັ້ງປະຕິບັດກ່ຽວກັບແຫລ່ງກຳເນີດສິນຄ້າ

## ມາດຕາ 11. ການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າສົ່ງອອກ

ການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າສົ່ງອອກ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກທີ່ຕ້ອງການໃບຢັ້ງຢືນແຫລ່ງກຳເນີດສິນຄ້າສົ່ງອອກ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານທີ່ຖືກຕ້ອງຕໍ່ເຈົ້າໜ້າທີ່ທີ່ມີສິດອອກໃບຢັ້ງຢືນນັ້ນ;
2. ເຈົ້າໜ້າທີ່ທີ່ມີສິດອອກໃບຢັ້ງຢືນ ຕ້ອງກວດກາແຫລ່ງກຳເນີດສິນຄ້າສົ່ງອອກຢ່າງລະອຽດ ແລ້ວອອກໃບຢັ້ງຢືນພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ພ້ອມດ້ວຍເອກະສານຢ່າງຄົບຖ້ວນ ແລະຖືກຕ້ອງ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ກວດ

ການຂະບວນການຜະລິດ, ກຳນົດເວລາດັ່ງກ່າວ ອາດຈະແກ່ຍາວອອກໄປ ແຕ່ສູງສຸດບໍ່ໃຫ້ເກີນ ເຈັດວັນ ລັດຖະການ; ເຈົ້າໜ້າທີ່ ຈະບໍ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ໃຫ້ແກ່ຜູ້ຮ້ອງຂໍ ຖ້າວ່າເອກະສານທີ່ນຳ ສະເໜີນັ້ນຫາກບໍ່ຖືກຕ້ອງ ຫລື ບໍ່ຄົບຖ້ວນ;

3. ຖ້າວ່າເຈົ້າໜ້າທີ່ພາສີ ຫລືອົງການທີ່ກ່ຽວຂ້ອງອື່ນຂອງປະເທດທີ່ນຳເຂົ້າສິນຄ້າຈາກ ສປປ ລາວ ຫລື ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງ ສປປ ລາວ ຫາກສະເໜີໃຫ້ກວດກາຄືນແຫລ່ງກຳເນີດສິນຄ້າໃດໜຶ່ງ, ເຈົ້າໜ້າທີ່ ຫລືອົງການທີ່ມີສິດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຈະຕ້ອງໄດ້ພິສູດແຫລ່ງກຳເນີດສິນຄ້າທີ່ກ່ຽວຂ້ອງນັ້ນ ແລ້ວແຈ້ງຜົນຂອງການພິສູດໃຫ້ແກ່ຜູ້ສະເໜີ;

4. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ອອກໃຫ້ໂດຍໜ່ວຍງານອອກໃບຢັ້ງຢືນແຫລ່ງກຳເນີດ ແມ່ນອອກຕາມແບບຟອມທີ່ກຳນົດໄວ້.

**ມາດຕາ 12. ການແຈ້ງພາສີ ແລະ ການກຳນົດລ່ວງໜ້າແຫລ່ງກຳເນີດສິນຄ້ານຳເຂົ້າ**

ການແຈ້ງພາສີ ແລະ ການກຳນົດລ່ວງໜ້າແຫລ່ງກຳເນີດສິນຄ້ານຳເຂົ້າ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າຕ້ອງສະເໜີຫລັກຖານ ກ່ຽວກັບ ແຫລ່ງກຳເນີດສິນຄ້ານຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້;

2. ເຈົ້າໜ້າທີ່ພາສີຂອງ ສປປ ລາວ ຈະກຳນົດແຫລ່ງກຳເນີດສິນຄ້ານຳເຂົ້າ ໃນເວລາຜູ້ນຳເຂົ້າແຈ້ງເສຍພາສີ. ແຕ່ເຈົ້າໜ້າທີ່ພາສີ ອາດຈະກຳນົດລ່ວງໜ້າແຫລ່ງກຳເນີດສິນຄ້າທີ່ຈະນຳເຂົ້າ ຖ້າວ່າຜູ້ນຳເຂົ້າຫາກຮ້ອງຂໍ ແລະປະກອບເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງຢ່າງຖືກ ຕ້ອງ ແລະ ຄົບຖ້ວນ.

**ມາດຕາ 13. ການອອກຄຳຕົກລົງກ່ຽວກັບແຫລ່ງກຳເນີດສິນຄ້ານຳເຂົ້າ**

ການສະເໜີອອກຄຳຕົກລົງກ່ຽວກັບແຫລ່ງກຳເນີດສິນຄ້ານຳເຂົ້າ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ຫລືບຸກຄົນອື່ນ ທີ່ກ່ຽວຂ້ອງ ອາດຈະຮ້ອງຂໍໃຫ້ເຈົ້າໜ້າທີ່ພາສີອອກຄຳຕົກລົງກ່ຽວກັບແຫລ່ງກຳເນີດທີ່ຕົນຈະໃຫ້ແກ່ສິນຄ້ານຳເຂົ້າໃດໜຶ່ງ ໂດຍໄວ ຫລື ຢ່າງຊ້າບໍ່ໃຫ້ເກີນ ຮ້ອຍຫ້າສິບ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ຖ້າຫາກມີຂໍ້ມູນ ແລະຫລັກຖານຕ່າງໆ ທີ່ຈຳເປັນ ແລະຄົບຖ້ວນແລ້ວ. ການຮ້ອງຂໍຄຳຕົກລົງດັ່ງກ່າວ ຈະຕ້ອງໄດ້ຮັບການເຫັນດີກ່ອນຈະດຳເນີນການຊື້ຂາຍສິນຄ້ານັ້ນ ຫລື ອາດຈະໄດ້ຮັບການເຫັນດີໃນເວລາໃດເວລາໜຶ່ງຫລັງຈາກນັ້ນກໍໄດ້;

2. ຄຳຕົກລົງກ່ຽວກັບແຫລ່ງກຳເນີດສິນຄ້າ ຈະໃຊ້ໄດ້ເປັນເວລາ ສາມ ປີ ຖ້າວ່າຄວາມເປັນຈິງ ແລະເງື່ອນໄຂທີ່ກ່ຽວຂ້ອງກັບສິນຄ້າ ລວມທັງລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າທີ່ໃຊ້ໃນການຕົກລົງນັ້ນ ຫາກຍັງຄືເກົ່າ;

3. ຄຳຕົກລົງກ່ຽວກັບແຫລ່ງກຳເນີດສິນຄ້ານີ້ ຈະໃຊ້ບໍ່ໄດ້ ເມື່ອມີຄຳຕົກລົງທີ່ຂັດກັບຄຳຕົກລົງກ່ອນນັ້ນ ແລະຖ້າວ່າພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຫາກໄດ້ຖືກແຈ້ງໃຫ້ຊາບກ່ອນແລ້ວ;

4. ຄຳຕິກລົງກ່ຽວກັບແຫລ່ງກຳເນີດສິນຄ້າ ສາມາດໃຫ້ມວນຊົນເຂົ້າເຖິງໄດ້ ຕາມເງື່ອນໄຂຂອງ ມາດຕາ 16 ຂໍ້ 2 ຂອງດຳລັດສະບັບນີ້.

**ມາດຕາ 14. ການສະເໜີໃບຢັ້ງຢືນແຫລ່ງກຳເນີດສິນຄ້າ**

ຜູ້ນຳເຂົ້າ ຕ້ອງສະເໜີໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ສຳລັບສິນຄ້ານຳເຂົ້າ ຕໍ່ເຈົ້າໜ້າທີ່ພາສີໃນເວລາແຈ້ງເສຍພາສີ ຖ້າວ່າ:

1. ຜູ້ນຳເຂົ້າຫາກຕ້ອງການນຳໃຊ້ສິດພິເສດ ຕາມກົດໝາຍຂອງ ສປປ ລາວ ຫລືສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ສິນຄ້ານຳເຂົ້າ ຫາກມີແຫລ່ງກຳເນີດຈາກປະເທດທີ່ ສປປ ລາວໃຫ້ສິດພິເສດ ພາຍໃຕ້ສັນຍາສອງຝ່າຍ;
3. ສິນຄ້ານຳເຂົ້າ ຫາກຖືກຈັດຢູ່ໃນບັນຊີລາຍການສິນຄ້າຄວບຄຸມ ຕາມລະບຽບກົດໝາຍຂອງ ສປປ ລາວ ຫລືສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
4. ສິນຄ້ານຳເຂົ້າ ຫາກຖືກຈັດຢູ່ໃນບັນຊີລາຍການສິນຄ້າທີ່ ສປປ ລາວ ຫລືອົງການຈັດຕັ້ງສາກົນ ປະກາດວ່າເປັນສິນຄ້າທີ່ເປັນອັນຕະລາຍ ຊຶ່ງອາດຈະກໍ່ຄວາມເສຍຫາຍຕໍ່ຄວາມປອດໄພຂອງສັງຄົມ, ສຸຂະພາບຂອງຄົນ, ສັດ, ພືດ ແລະສິ່ງແວດລ້ອມ ແລະມີຄວາມຈຳເປັນຕ້ອງໄດ້ຄວບຄຸມ;
5. ສິນຄ້າຫາກນຳເຂົ້າຈາກປະເທດທີ່ ສປປ ລາວ ກຳລັງປະຕິບັດມາດຕະການຕອບໂຕ້ການທຸ່ມຕະ ຫລາດ ຫລືການອຸດໜູນ, ການປົກປ້ອງຜູ້ຜະລິດພາຍໃນ ຫລື ການຈຳກັດປະລິມານການນຳເຂົ້າ.

**ມາດຕາ 15. ການທົບທວນຄືນຄຳຕິກລົງກ່ຽວກັບການກຳນົດແຫລ່ງກຳເນີດສິນຄ້າ**

ຜູ້ນຳເຂົ້າ ທີ່ບໍ່ພໍໃຈຕໍ່ຄຳຕິກລົງກ່ຽວກັບການກຳນົດແຫລ່ງກຳເນີດສິນຄ້າ ອາດຈະຮ້ອງຂໍໃຫ້ເຈົ້າໜ້າທີ່ພາສີທົບທວນຄືນ ຫລື ສະເໜີຕໍ່ກະຊວງການເງິນ ເພື່ອພິຈາລະນາແກ້ໄຂ ຊຶ່ງອາດຈະມີການປ່ຽນແປງ ຫລືລົບລ້າງຄຳຕິກລົງນັ້ນ. ໃນກໍລະນີທີ່ຜູ້ນຳເຂົ້າ ຫາກບໍ່ພໍໃຈຕໍ່ຜົນຂອງການແກ້ໄຂ, ຜູ້ກ່ຽວ ກໍມີສິດຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕົກລົງ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 16. ການເກັບຮັກສາສຳນວນໃບຢັ້ງຢືນແຫລ່ງກຳເນີດສິນຄ້າ**

ການເກັບຮັກສາສຳນວນໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກທີ່ຍື່ນຄຳຮ້ອງຂໍໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ແລະ ເຈົ້າໜ້າທີ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຕ້ອງເກັບຮັກສາສຳນວນໃບຢັ້ງຢືນແຫລ່ງກຳເນີດສິນຄ້າໄວ້ໃນເວລາຢ່າງໜ້ອຍ ສາມ ປີ ນັບແຕ່ວັນອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ເປັນຕົ້ນໄປ;

2. ຂໍ້ມູນຕ່າງໆທີ່ເປັນຄວາມລັບ ຫລື ທີ່ໄດ້ສະໜອງໃຫ້ໃນທາງລັບເພື່ອນໍາໃຊ້ໃນການກໍານົດແຫລ່ງກໍາເນີດສິນຄ້າ ຈະຖືກຮັກສາໄວ້ເປັນຄວາມລັບ ໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ຖ້າບໍ່ໄດ້ຮັບອະນຸຍາດສະເພາະຈາກບຸກຄົນ ຫລື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຊຶ່ງໄດ້ສະໜອງຂໍ້ມູນດັ່ງກ່າວ, ຫ້າມເປີດເຜີຍຂໍ້ມູນນັ້ນ ຍົກເວັ້ນກໍລະນີການດໍາເນີນຄະດີຂອງສານ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາແຫລ່ງກໍາເນີດສິນຄ້າ

**ມາດຕາ 17. ອົງການຄຸ້ມຄອງແຫລ່ງກໍາເນີດສິນຄ້າ**

ລັດຖະບານ ຄຸ້ມຄອງວຽກງານແຫລ່ງກໍາເນີດສິນຄ້າຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງອຸດສາຫະກໍາ ແລະການຄ້າ ແລະ ກະຊວງການເງິນດໍາເນີນ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກໍາ ແລະ ການຄ້າ**

ໃນການຄຸ້ມຄອງ ແລະ ກວດກາ ແຫລ່ງກໍາເນີດສິນຄ້າ ກະຊວງອຸດສາຫະກໍາ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ອອກລະບຽບການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການຕາມພາລະບົດບາດຂອງຕົນ;
2. ອອກໃບຢັ້ງຢືນແຫ່ລງກໍາເນີດສິນຄ້າສໍາລັບສິນຄ້າສົ່ງອອກ ຫລື ມອບໃຫ້ພະແນກອຸດສາຫະກໍາ ແລະການຄ້າແຂວງ, ນະຄອນ ຫລື ສະພາການຄ້າ ແລະ ອຸດສາຫະກໍາ ເປັນຜູ້ອອກໃບຢັ້ງຢືນດັ່ງກ່າວ;
3. ຊີ້ນໍາການຈັດຕັ້ງປະຕິບັດວຽກງານກ່ຽວກັບແຫລ່ງກໍາເນີດສິນຄ້າໃນຂອບເຂດທົ່ວປະເທດ;
4. ຈັດພິມເຜີຍແຜ່ລະບຽບການ ແລະ ຂໍ້ມູນຕ່າງໆກ່ຽວກັບແຫລ່ງກໍາເນີດສິນຄ້າ ໂດຍຜ່ານໜັງສືພິມ ຫລື ສື່ອື່ນໆ ລວມທັງເວັບໄຊຂອງຕົນ ເພື່ອໃຫ້ຜູ້ດໍາເນີນທຸລະກິດ, ພາກສ່ວນຕ່າງໆຂອງລັດ, ເອກະຊົນ ແລະບຸກຄົນ ສາມາດເຂົ້າເຖິງໄດ້;
5. ອອກ, ໂຈະ ຫລື ຖອນໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ;
6. ພິຈາລະນາແກ້ໄຂ ຄໍາສະເໜີກ່ຽວກັບແຫລ່ງກໍາເນີດສິນຄ້າສົ່ງອອກ;
7. ກໍ່ສ້າງ ແລະ ຍົກລະດັບພະນັກງານ ກ່ຽວກັບວຽກງານແຫລ່ງກໍາເນີດສິນຄ້າ;
8. ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານແຫລ່ງກໍາເນີດສິນຄ້າ;
9. ລາຍງານກ່ຽວກັບວຽກງານແຫລ່ງກໍາເນີດສິນຄ້າ ຕາມຂອບເຂດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ໃຫ້ລັດຖະບານຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນ ລະບຽບກົດໝາຍ.

**ມາດຕາ 19. ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງ ແລະ ກວດກາ ແຫລ່ງກຳເນີດສິນຄ້າ ກະຊວງການເງິນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບແຫລ່ງກຳເນີດສິນຄ້າ ຕາມພາລະບົດບາດຂອງຕົນ;
2. ຈັດຕັ້ງປະຕິບັດລະບຽບການກ່ຽວກັບການກວດກາແຫລ່ງກຳເນີດສິນຄ້ານຳເຂົ້າ;
3. ຈັດພິມເຜີຍແຜ່ລະບຽບການ ແລະ ຂໍ້ມູນຕ່າງໆກ່ຽວກັບການກຳນົດ ແລະ ກວດກາແຫລ່ງກຳເນີດສິນຄ້າ ໂດຍຜ່ານໜັງສືພິມ ຫລື ສື່ອື່ນໆ ລວມທັງເວັບໄຊຂອງຕົນ ເພື່ອໃຫ້ຜູ້ດຳເນີນທຸລະກິດ, ພາກສ່ວນຕ່າງໆຂອງລັດ, ເອກະຊົນ ແລະ ບຸກຄົນສາມາດເຂົ້າເຖິງໄດ້;
4. ສ້າງຕັ້ງລະບົບຂໍ້ມູນຂ່າວສານ, ລະບົບລາຍງານ ກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າ ເພື່ອໃຫ້ການບໍລິການ ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການກວດກາແຫລ່ງກຳເນີດສິນຄ້ານຳເຂົ້າ;
5. ພິຈາລະນາອະນຸມັດ ຫລື ປະຕິເສດສິດການຫລຸດຜ່ອນ ຫລື ການຍົກເວັ້ນພາສີນຳເຂົ້າ ຕາມລະບຽບກ່ຽວກັບແຫລ່ງກຳເນີດສິນຄ້າ;
6. ພິຈາລະນາ ແລະ ແກ້ໄຂຄຳສະເໜີກ່ຽວກັບແຫລ່ງກຳເນີດສິນຄ້ານຳເຂົ້າ;
7. ກໍ່ສ້າງ ແລະ ຍົກລະດັບພະນັກງານ ກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າ;
8. ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານແຫ່ລງກຳເນີດສິນຄ້າ;
9. ລາຍງານກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າ ຕາມຂອບເຂດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ໃຫ້ລັດຖະບານຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 20. ອົງການກວດກາແຫລ່ງກຳເນີດສິນຄ້າ

ອົງການກວດກາແຫລ່ງກຳເນີດສິນຄ້າ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງແຫລ່ງກຳເນີດສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດສະບັບນີ້;
2. ອົງການກວດກາພາຍນອກ ເຊັ່ນ ອົງການກວດກາລັດ.

**ມາດຕາ 21. ເນື້ອໃນກວດກາ**

ເນື້ອໃນກວດກາກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າມີດັ່ງນີ້:

1. ການປະຕິບັດລະບຽບການກ່ຽວກັບວຽກງານແຫລ່ງກຳເນີດສິນຄ້າ;
2. ຂະບວນການຜະລິດສິນຄ້າ ໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ;

3. ຄວາມຖືກຕ້ອງຂອງເອກະສານກ່ຽວກັບການສະເໜີຂໍໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ;
4. ການມອບໝາຍ ແລະການກໍານົດຂອງລະບຽບກົດໝາຍ.

**ມາດຕາ 22. ຮູບການກວດກາ**

ຮູບການກວດກາວຽກງານແຫລ່ງກໍາເນີດສິນຄ້າ ປະກອບດ້ວຍ ການກວດກາຕາມແຜນການປົກກະຕິ, ການກວດການອກແຜນການ ໂດຍມີການແຈ້ງລ່ວງໜ້າ ແລະ ການກວດກາແບບກະທັນຫັນ.

ການກວດກາຕາມແຜນການປົກກະຕິ ແມ່ນການກວດທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະມີກໍານົດເວລາອັນແນ່ນອນ.

ການກວດການອກແຜນການ ໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງ ໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລືການຈັດຕັ້ງທີ່ມີຜົນງານອັນດີເດັ່ນໃນການຈັດຕັ້ງປະຕິບັດ ດໍາລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 24. ມາດຕະການຕໍ່ຜູ້ລະເມີດ**

ຜູ້ນໍາເຂົ້າ ແລະສົ່ງອອກ ຫາກໄດ້ລະເມີດດໍາລັດສະບັບນີ້ ເຊັ່ນ: ປອມແປງ , ປ່ຽນແປງ ຫລືຊື້ຂາຍໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ ຈະຖືກປະຕິບັດມາດຕະການຕ່າງໆ ເຊັ່ນ: ກ່າວເຕືອນ, ສຶກສາອົບຮົມ, ໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫລື ຖອນສິດ ໃນການເຄື່ອນໄຫວທຸລະກິດການຄ້າລະຫວ່າງປະເທດ ຕາມແຕ່ລະກໍລະນີການກະທໍາຜິດສະຖານເບົາ ຫລືໜັກ. ຖ້າວ່າການລະເມີດດັ່ງກ່າວ ຫາກເປັນການກະທໍາຜິດທາງອາຍາ ແມ່ນຈະຖືກດໍາເນີນຄະດີ ຕາມກົດໝາຍອາຍາ.

ເຈົ້າໜ້າທີ່ ຫລືພະນັກງານໃດ ຫາກໄດ້ລະເມີດດໍາລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການຕ່າງໆ ເຊັ່ນ: ກ່າວເຕືອນ, ສຶກສາອົບຮົມ, ຍົກຍ້າຍໜ້າທີ່, ປົດຕໍາແໜ່ງ ຫລື ຖືກໄລ່ອອກ ຈາກລັດຖະການ ຕາມແຕ່ລະກໍລະນີການກະທໍາຜິດສະຖານເບົາ ຫລືໜັກ. ຖ້າວ່າການລະເມີດນັ້ນ ຫາກເປັນການກະທໍາຜິດທາງອາຍາ ແມ່ນຈະຖືກດໍາເນີນຄະດີຕາມກົດໝາຍອາຍາ.

# ໝວດທີ 7
# ບົດບັນຍັດສຸດທ້າຍ

**ມາດຕາ 25. ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະການຄ້າ ແລະ ກະຊວງການເງິນ ມີໜ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ.

ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 26. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫລັງ 90 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍການຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ສະບັບເລກທີ 97/ນຍ, ລົງວັນທີ 08 ທັນວາ 1992.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ